## ການສະເໜີ ຂັ້ນຕອນ ງົບປະມານ PIP ທີ່ດີ ແລະ ບັນດາວິທີການ ການຄຸ້ມຄອງ ທາງດ້ານການເງິນ PIP

ນີ້ແມ່ນຫົວຂໍ້ການພັດທະນາອັນໃໝ່ ສຳລັບໂຄງການ ພີແຄັບ 2. ການຈັດສັນງົບປະມານ ທີ່ບໍ່ພຽງພໍ ອາດຈະເຮັດໃຫ້ມີຄວາມຫຍຸ້ງຍາກ ທີ່ຈະສຳເລັດ ໂຄງການ ດັ່ງທີ່ຄາດໝາຍໄວ້, ແລະ ອາດກະທົບຕໍ່ຜົນສຳເລັດຂອງ ເປົ້າໝາຍ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ. ພີແຄັບ 2 ໄດ້ລະບຸ ປະເດັນຕົ້ນຕໍຕ່າງໆ ໃນ ສາຂາ ຂອງການຄຸ້ມຄອງ ງົບປະມານ PIP.

### ຂັ້ນຕອນ ງົບປະມານ PIP ທີ່ດີ

➤ ປະເດັນຫຼັກ

ທີມງານ ພີແຄັບ 2 ໄດ້ລະບຸ ປະເດັນຕ່າງໆ ກ່ຽວກັບ ການຄຸ້ມຄອງ ງົບປະມານ PIP ໂດຍຜ່ານ ການປຶກສາຫາລືກັບ MPI ແລະ ບັນດາແຂວງ. ປະເດັນຫຼັກ ທີ່ທາງທີມງານ ພີແຄັບ2 ໄດ້ລະບຸ ແມ່ນ **ມີໂຄງການທີ່ບໍ່ເໝາະສົມ, ບໍ່ມີປະສິດທິພາບ ແລະ ບໍ່ມີປະສິດທິຜົນ ຈຳນວນໜຶ່ງ.** ການຄຸ້ມຄອງງົບປະມານ ທີ່ບໍ່ພຽງພໍ ໄດ້ຖືກພິຈະລະນາວ່າ ເປັນໜຶ່ງໃນສາຍເຫດຕົ້ນຕໍ ຂອງປະເດັນຫຼັກນີ້.

ປະເດັນຕ່າງໆ ໃນການຄຸ້ມຄອງ PIP, ໂດຍສະເພາະ ສິ່ງຕ່າງໆ ທີ່ກ່ຽວຂ້ອງກັບ ປະເດັນຫຼັກຂ້າງເທິງ, ມີດັ່ງນີ້.

1) ການປະເມີນ ໂຄງການ PIP ບໍ່ໄດ້ດຳເນີນການຢ່າງເໝາະສົມ ເຊິ່ງເປັນ ພາກສ່ວນໜຶ່ງຂອງຂະບວນການ ວາງງົບປະມານ PIP ປະຈຳປີ.
2) ຍ້ອນການຫຼ້າຊ້າ ໃນການຊຳລະຈ່າຍມູນຄ່າຂອງໂຄງການ, ໂຄງການມີຄ່າໃຊ້ຈ່າຍສູງຂຶ້ນ ແລະ ສຳເລັດຊັກຊ້າ.

ບັນດາໂຄງການ ທີ່ມີ ຂອບເຂດ ບໍ່ເໝາະສົມ ຕ້ອງຖືກປະຕິເສດ ໂດຍການປະເມີນ. ຢ່າງໃດກໍ່ຕາມ, ຍ້ອນວ່າ ຂະບວນການ ງົບປະມານທີ່ບໍ່ມີສະຖຽນລະພາບ, ຫຼາຍໆໂຄງການ ທີ່ມີຜົນການປະເມີນທີ່ບໍ່ດີ ຍັງຄົງມີລາຍຊື່ ໃນການສະເໜີຂໍງົບປະມານ PIP ທີ່ຍື່ນຕໍ່ MPI. ແນະນຳວ່າ ຕ້ອງມີການປັບປຸງ ຂັ້ນຕອນ ການວາງງົບປະມານ, ລວມເຖິງ ກຳນົດມື້ຍື່ນ ແລະ ເນື້ອໃນຂອງປຶດແນະນຳ ແລະ ຂັ້ນຕອນການປະເມີນ.

ໃນຈຳນວນໂຄງການ PIP, ໂຄງການ ທີ່ມີບັນຫາການຊຳລະຈ່າຍ ຢ່າງໜັກໜ່ວງ ເອີ້ນວ່າ “ໂຄງການໜີ້”. ຢ່າງໃດກໍ່ຕາມ, ໂຄງການອື່ນໆ ທີ່ບໍ່ໄດ້ຢູ່ໃນປະເພດ “ໂຄງການໜີ້” ກໍ່ພົບພໍ້ບັນຫາແບບດຽວກັນ.

➤ ມາດຕະຖານ ແກ້ໄຂຕົ້ນຕໍ

ຂ້າງລຸ່ມນີ້ ແມ່ນ ມາດຕະການແກ້ໄຂຕົ້ນຕໍ ທີ່ທາງ ພີແຄັບ2 ສະເໜີໃຫ້ ຕັດທອນ ຈຳນວນໂຄງການທີ່ບໍ່ເໝາະສົມ, ບໍ່ມີປະສິດທິພາບ ແລະ ປະສິດທິຜົນ.

1) ໃຫ້ DPI ແລະ ພະແນກ ແຜນການ ມີເວລາຢ່າງພຽງພໍ ໃນການປະເມີນໂຄງການ ໂດຍການ ປັບປຸງ

ແຜນເວລາ ການວາງງົບປະມານ PIP ທັງໝົດ.

2) ພັດທະນາ ຂະບວນການ ທີ່ MPI ໄດ້ວາງທິດທາງຢ່າງຈະແຈ້ງ ໃນການ ແກ້ໄຂບັນຫາການຊຳລະຈ່າຍ ແລະ ຕິດຕາມກວດກາ ຄວາມຄືບໜ້າ ດັ່ງນັ້ນ ບັນດາແຂວງ, ໜ່ວຍງານຮັບຜິດຊອບ ໃນການວາງແຜນ ແລະ ເປີກຈ່າຍງົບປະມານ ສາມາດ ແກ້ໄຂບັນຫາ ການຊຳລະຈ່າຍດ້ວຍຕົວຂອງເຂົາເຈົ້າເອງ.

**ການຄຸ້ມຄອງ ທາງດ້ານການເງິນ PIP**

➤ ປະເດັນ ຫຼັກ

ຂ້າງລຸ່ມນີ້ ແມ່ນປະເດັນຕ່າງໆ ກ່ຽວກັບ ຂັ້ນຕອນ ການວາງງົບປະມານ PIP

(ກ) MPI ແລະ DPI ບໍ່ມີເວລາພຽງພໍ ໃນການປະເມີນ ບັນດາບົດສະເໜີໂຄງການ.
(ຂ) ກຳນົດເວລາສຸດທ້າຍ ໃນການຍື່ນບົດສະເໜີໂຄງການຈາກເຈົ້າຂອງໂຄງການຕໍ່ DPI ບໍ່ຈະແຈ້ງ
(ຄ) ເຈົ້າຂອງໂຄງການ ຍື່ນຫຼາຍໂຄງການໂພດ.

ຍ້ອນປະເດັນຕ່າງໆ ຂ້າງເທິງນີ້, ເຖິງແມ້ນວ່າ ພີແສັບ2 ໄດ້ມີການພັດທະນາ ເຄື່ອງມືການປະເມີນໂຄງການຕ່າງໆ ເພື່ອປັບປຸງຄຸນນະພາບໂຄງການກໍ່ຕາມ, ແຕ່ ຄຸນນະພາບຂອງບົດສະເໜີໂຄງການຍັງບໍ່ທັນຮັບປະກັນ ໄດ້ເທື່ອ. ເພື່ອຮັບປະກັນ ຄຸນນະພາບຂອງບົດສະເໜີໂຄງການທີມງານ ພີແສັບ2 ໄດ້ສະເໜີ ມາດຕະການແກ້ໄຂດັ່ງນີ້

(ກ) MPI ຄວນຈະປະກາດ ບົດແນະນຳ ການວາງງົບປະມານ ໃນເດືອນ 12 ດັ່ງນັ້ນ DPI ມີເວລາຫຼາຍຂຶ້ນ ສຳລັບປະເມີນໂຄງການ.

(2) ບົດແນະນຳ ລະບຸ ກຳນົດເວລາສຸດທ້າຍ ສຳລັບຍື່ນບົດສະເໜີ ໃຫ້ DPIs. ພີແສັບ2 ແນະນຳວ່າ ກຳນົດເວລາສຸດທ້າຍແມ່ນ 6 ອາທິດກ່ອນທີ່ DPI ຈະຍື່ນການສະເໜີຂໍງົບປະມານ PIP ເຖິງ MPI. ຍ້ອນແນວນັ້ນ, DPI ຈະມີເວລາພຽງພໍ ໃນການປະເມີນໂຄງການ ກ່ອນທີ່ຈະຍື່ນ ການສະເໜີຂໍງົບປະມານ PIP.

| | |
|---|---|
| ເດືອນ 12 | ແຈ້ງການ ບົດແນະນຳຂອງ MPI ກ່ຽວກັບການວາງ ງົບປະມານ |
| ເດືອນ 12-ເດືອນ 1<br>(2 ເດືອນ) | ການກະກຽມ ບົດສະເໜີ ໂດຍ ເມືອງ ແລະ ເຈົ້າຂອງໂຄງການ |
| ເດືອນ 2-ເດືອນ 3<br>(1 ເດືອນ) | ການປະເມີນໂຄງການ ໂດຍ DPI |
| ເດືອນ 3<br>(0.5 ເດືອນ) | ການປະເມີນ ແບບ ສົມທຽບ (CompAss) ໂດຍ DPI ແລະ ພະແນການ ອ້ອມຂ້າງກະຊວງ<br>ຮ່າງ ລາຍຊື່ PIP ເບື້ອງຕົ້ນ ສຳລັບຍື່ນໃຫ້ MPI |

(ຄ) ປຶດແນະນຳ ລວມມີ ຂໍ້ແນະນຳ ກ່ຽວກັບ ການວາງ ຄ່າໃຊ້ຈ່າຍ PIP ໄລຍະກາງ. ຂໍ້ແນະນຳ ໄດ້ໃຫ້ລາຍລະອຽດ ການຫຼີກລ່ຽງ "ໜີ້ສິນ" ຕົວຢ່າງ ມູນຄ່າໂຄງການລຶບໃຫ້ ຈຳນວນທີ່ຈ່າຍ, ການແຈ້ງການ ກ່ຽວກັບເພດານ ຂອງມູນຄ່າໂຄງການໃໝ່. ເພດານ ແມ່ນຄ່ອນຂ້າງ ຈະຫຼຸດ ຈຳນວນໂຄງການໃໝ່. ດັ່ງນັ້ນ DPI ສາມາດໃຊ້ເວລາຫຼາຍຂື້ນເພື່ອປະເມີນໂຄງການ, ແລະ ຄຸນນະພາບຂອງໂຄງການຈະໄດ້ຮັບ ການປັບປຸງຂຶ້ນ.

ນີ້ແມ່ນ ການດຳເນີນການ ເພື່ອ ຍົກລະດັບ ຄວາມສະຖຽນລະພາບ ທາງດ້ານການເງິນ PIP
(ກ) ສ້າງ ວິທີ ການວິເຄາະ ທາງດ້ານການເງິນ PIP ແລະ ຝຶກອົບຮົມ ໃຫ້ກັບ ພະນັກງານ
(ຂ) ສ້າງຕັ້ງ ວິທີການ ເພື່ອຍົກລະດັບ ສະຖຽນລະພາບ ທາງດ້ານ ການເງິນ PIP ຂັ້ນແຂວງ ແລະ ຝຶກອົບຮົມ ໃຫ້ກັບພະນັກງານ DPI ແຂວງ.

ໃນການ ສ້າງວິທີ ການວິເຄາະ ທາງດ້ານ ການເງິນ PIP, ພີແຄັບ2 ໄດ້ສ້າງຕົວຊີ້ວັດ ເພື່ອວັດແທກ ລະດັບ ບັນຫາ ການຊຳລະຈ່າຍ ພາຍໃນບັນດາແຂວງ. ຕົວຊີ້ວັດ ວັດແທກ ***"ໄລຍະເວລາ ການຊຳລະຈ່າຍ"*** ຂອງຈຳນວນມູນຄ່າ ໂຄງການ PIP ທັງໝົດ, ທີ່ສະແດງເຖິງ ຈຳນວນປີ ທີ່ແຂວງ ຈະສິ້ນສຸດ ການຊຳລະຈ່າຍ ສຳລັບ ບັນດາໂຄງການ PIP ທີ່ມີຢູ່.

ໄລຍະເວລາຊຳລະຈ່າຍສະແດງໃຫ້ເຫັນເຖິງຄວາມໜັກໜ່ວງຂອງບັນຫາການຊຳລະຈ່າຍ ໃນແຕ່ລະແຂວງ. ໄລຍະເວລາ ໄດ້ມາຈາກ ຈຳນວນໜີ້ ຫານໃຫ້ ງົບປະມານປະຈຳປີ. ເມື່ອໄລຍະເວລາຊຳລະຈ່າຍສັ້ນລົງ, ຈຳນວນ ຄ່າໃຊ້ຈ່າຍ ເພີ່ມເຕີມ ແມ່ນຫຼຸດລົງ. ຄ່າໃຊ້ຈ່າຍເພີ່ມເຕີມທີ່ຫຼຸດລົງດັ່ງກ່າວໝາຍເຖິງ ມີງົບປະມານ ຫຼາຍຂຶ້ນ ເພື່ອເຮັດໃຫ້ສຳເລັດໂຄງການ, ກໍ່ຈະເຮັດໃຫ້ ມີຜົນກະທົບ ທາງບວກຕໍ່ກັບເສດຖະກິດ, ແລະ ປະກອບສ່ວນ ເຮັດໃຫ້ບັນລຸເປົ້າໝາຍ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ.

ເພື່ອຫຼຸດຜ່ອນ ໄລຍະເວລາຊຳລະຈ່າຍ, ຕ້ອງມີໜີ້ໜ້ອຍທີ່ສຸດ. ດັ່ງນັ້ນຄ່າໃຊ້ຈ່າຍສຳລັບໂຄງການ ໃໝ່ຕ້ອງມີການຄວບຄຸມ ແລະຄ່າໃຊ້ຈ່າຍ ຂອງໂຄງການທີ່ມີຢູ່ຕ້ອງ ມີການຕິດຕາມກວດກາຢ່າງໃກ້ຊິດ. ຈາກນັ້ນ, ພາລະບົດບາດ ຂອງກະຊວງ ແຜນການ ແລະ ການລົງທຶນ ໃນການເສີມສ້າງ ສະຖຽນລະພາບ ທາງດ້ານການເງິນ PIP ແມ່ນການວາງທິດທາງທີ່ຈະແຈ້ງເພື່ອຫຼີກລ່ຽງ ການເພີ່ມຂຶ້ນຂອງ ຈຳນວນໜີ້ສິນ ແລະ ໄລຍະເວລາຊຳລະຈ່າຍ, ແລະ ພາລະບົດບາດຂອງ ບັນດາແຂວງ, ແມ່ນການປັບປຸງ ສະຖານະພາບ ທາງດ້ານການເງິນ PIP ຂອງເຂົາເຈົ້າ ໂດຍການຫຼຸດຜ່ອນ ໄລຍະເວລາ ການຊຳລະຈ່າຍ ດ້ວຍຕົວຂອງເຂົາເຈົ້າເອງ.

ປັດຈຸບັນນີ້ ພີແຄັບ2 ກຳລັງກະກຽມ ການຝຶກອົບຮົມ ໃຫ້ກັບ MPI ແລະ DPI ເພື່ອຊຸກຍູ້ ການຄຸ້ມຄອງ ງົບປະມານ PIP ໂດຍການປັບປຸງ ຂັ້ນຕອນ ການວາງງົບປະມານ PIP ແລະ ຍົກລະດັບ ສະຖຽນລະພາບ ທາງດ້ານ ການເງິນ PIP.